# ປະກາດຮັບສະໝັກພະນັກງານ

# ທະນາຄານແຫ່ງປະເທດ ຈີນ (ຮົ່ງກົງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

ທະນາຄານແຫ່ງປະເທດຈີນ ສ້າງຕັ້ງຂຶ້ນໃນປີ 1912, ເປັນທະນາຄານທີ່ມີຄວາມຫຼາກຫຼາຍ ແລະ ເປັນສາກົນທີ່ສຸດຂອງ ສປ ຈີນ, ໃນປະຈຸບັນທະນາຄານພວກເຮົາມີສາຂາຢູ່ 62 ປະເທດ ແລະ ຂົງເຂດ, ໃນປີ 2022 ທະນາຄານແຫ່ງປະເທດຈີນ ຖືກຈັດອັນດັບທີ່ 4ໃນການຈັດອັນດັບທະນາຄານ 1000 ແຫ່ງທົ່ວໂລກ.

ທະນາຄານແຫ່ງປະເທດຈີນໄດ້ສ້າງຕັ້ງສາຂານະຄອນວຽງຈັນຂຶ້ນໃນວັນທີ 26 ມີນາ 2015, ໂດຍຜ່ານການດຳເນີນກິດຈະການເປັນເວລາ 08 ປີກວ່າ ແລະ ອີງຕາມຍຸດທະສາດທາງດ້ານຄວາມເປັນສາກົນຂອງທະນາຄານພວກຂ້າພະເຈົ້າ ແລະ ອີງຕາມການພັດທະນາທາງດ້ານເສດຖະກິດການເງິນ ຂອງ ສປປ ລາວ ທີ່ຜ່ານມາ, ປະຈຸບັນທາງທະນາຄານແມ່ນຈະໄດ້ເປີດຮັບສະໝັກພະນັກງານໃໝ່ ຊຸດທີ່ໜຶ່ງຂອງປີ 2023, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

## I. ຮັບສະໝັກຕຳແໜ່ງ(Positions offered)

1. ພະນັກງານທົ່ວໄປ;
2. ພະນັກງານ ໄອທີ.
3. ພະນັກງານຂັບລົດ.

## II. ເງື່ອນໄຂພື້ນຖານຂອງຜູ້ສະໝັກ(Basic Qualification)

1. **ພະນັກງານທົ່ວໄປ:** ສັນຊາດ: ລາວ ຫຼື ຈີນ, ມີສຸຂະພາບແຂງແຮງ, ມີອາຍຸ 28 ປີ ລົງມາ, ຕ້ອງມີການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ, ໃນສາຂາວິຊາ: ເສດຖະສາດ, ການເງິນ, ການຄ້າ, ບໍລິຫານ, ການບັນຊີ ແລະ ອື່ນໆ; **ລະດັບພາສາຈີນແມ່ນໄດ້ຜ່ານການສອບເສັງລະດັບພາສາຈີນ(HSK) ລະດັບເກຼດ 4 ຂຶ້ນໄປ**, ສາມາດເວົ້າ ແລະ ຂຽນພາສາຈີນໃນລະດັບດີສົມຄວນ, ສາມາດເວົ້າພາສາອັງກິດໄດ້ໃນລະດັບໜຶ່ງ, ມີຄວາມຊຳນານໃນການນຳໃຊ້ໂປແກມ Office.
2. **ພະນັກງານໄອທີ:** ສັນຊາດ ລາວ ຫຼື ຈີນ, ມີສຸຂະພາບແຂງແຮງ, ມີອາຍຸ 28 ປີ ລົງມາ, ຕ້ອງມີການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ, ໃນສາຂາວິຊາ: ຄອມພິວເຕີ້, ໄອທີ; ສາມາດເວົ້າ ແລະ ຂຽນພາສາຈີນ ຫຼື ພາສາອັງກິດໃນລະດັບດີສົມຄວນ.
3. . **ພະນັກງານຂັບລົດ:** ສັນຊາດ: ລາວ, ເພດ: ຊາຍ, ມີສຸຂະພາບແຂງແຮງ, ມີອາຍຸ 35 ປີ ລົງມາ;ການສຶກສາຈົບລະດັບມັດທະຍົມປາຍຂຶ້ນໄປ, ມີໃບອະນຸຍາດຂັບຂີ່ລົດໃຫຍ່, ມີຄວາມລຶ້ງເຄີຍກັບເສັ້ນທາງໃນນະຄອນຫຼວງວຽງຈັນເປັນຢ່າງດີ ແລະ ມີປະສົບການໃນການຂັບລົດໃຫຍ່ຢ່າງໜ້ອຍ 5 ປີຂຶ້ນໄປ; ສາມາດນຳໃຊ້ພາສາຈີນໃນການສື່ສານໃນລະດັບທີ່ແນ່ນອນ ແມ່ນຈະໄດ້ຮັບການພິຈາລະນາເປັນພິເສດ;

4. ມີຄວາມຫ້າວຫັນໃນການເຮັດວຽກເປັນໝູ່ຄະນະ, ມີຄວາມຮັບຜິດຊອບວຽກງານ, ມີອັດທະຍາໃສດີໃນການພົວພັນກັບຄົນອື່ນໃນສັງຄົມ.

## III. ວິທີການສະໝັກ (How to apply)

1. ແບບຟອມຕື່ມຊີວະປະຫວັດ ແມ່ນສາມາດດາວໂຫຼດແບບຟອມເປັນພາສາຈີນ ຫຼື ພາສາອັງກິດໃນເວັບໄຊດ້ານລຸ່ມ, ເຊິ່ງແຕ່ລະແບບຟອມປະກອບ 2 ຕາຕະລາງ(worksheet), ກະລຸນາຕື່ມໃຫ້ຄົບຖ້ວນ.
2. ໃຫ້ປະກອບເອກະສານຊີວະປະຫວັດ, ໃບຢັ້ງຢືນການສຶກສາ, ລະດັບການສຶກສາ, ເອກະສານຢັ້ງຢືນຄວາມສາມາດທີ່ກ່ຽວຂ້ອງຕ່າງໆ ສົ່ງມາຍັງ E-mail: service.la@bankofchina.com, ຫົວຂໍ້ຂອງອີເມວແມ່ນຕ້ອງປະກອບມີ: ຊື່ ແລະ ນາມ ສະກຸນ + ຊື່ສະຖາບັນທີ່ຮຽນຈົບ + ວິຊາຮຽນ.
3. ຫຼື ຜູ້ສະໝັກສາມາດສົ່ງເອກະສານຊີວະປະຫວັດ, ໃບຢັ້ງຢືນການສຶກສາ, ລະດັບການສຶກສາ, ເອກະສານຢັ້ງຢືນຄວາມສາມາດທີ່ກ່ຽວຂ້ອງຕ່າງໆໄດ້ໂດຍກົງທີ່ເຄົາເຕີ້ ຂອງທະນາຄານແຫ່ງປະເທດຈີນ (ຮົງກົງ) ສາຂານະຄອນຫຼວງວຽງຈັນ, ເອກະສານທີ່ສົ່ງເຂົ້າມາຈະຕ້ອງໃສ່ຊອງ ແລະ ປິດປາກຊອງຄັກແນ່, ພ້ອມນັ້ນຕ້ອງຂຽນ: ຊື່ ແລະ ນາມສະກຸນ, ຊື່ສະຖາບັນທີ່ເຄີຍຮຽນຈົບ ແລະ ວິຊາຮຽນ ໃສ່ໜ້າຊອງ. ທີ່ຕັ້ງຂອງສຳນັກງານທະນາຄານແຫ່ງປະເທດຈີນ (ຮົງກົງ) ສາຂານະຄອນຫຼວງວຽງຈັນ: ຖະໜົນ ຄູວຽງ, ຕຶກວຽງຈັນເຊັນເຕີ້ No. A1003-A2003, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ເບີຕິດຕໍ່: 021 228888; 021 228877.
4. ວັນທີປິດຮັບສະໝັກ: ວັນທີ 04 ເດືອນ 08 ປີ 2023;
5. ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ສາຂານະຄອນຫຼວງວຽງຈັນ ແມ່ນຈະຕິດຕໍ່ຜູ້ຮັບສະໝັກໂດຍຜ່ານທາງອີເມວ, ໂທລະສັບມືຖື ຫຼື ວິທີການ ອື່ນໆ, ເພື່ອສອບຖາມຂໍ້ມູນເພີ່ມເຕີມ;
6. ຂໍໃຫ້ຜູ້ສະໝັກຈົ່ງກະກຽມເອກະສານຊີວະປະຫວັດ ແລະ ເອກະສານຢັ້ງຢືນການສຶກສາຕ່າງໆໃຫ້ຄົບຖ້ວນ ແລະ ຖືກຕ້ອງ, ຮັບປະກັນຄວາມຖືກຕ້ອງຕາມຄວາມເປັນຈິງ; ຖ້າຫາກພົບວ່າເອກະສານບໍ່ຖືກຕ້ອງຕາມຄວາມເປັນຈິງ, ທາງທະນາຄານແຫ່ງປະເທດຈີນແມ່ນສາມາດຍົກເລີກສິດໃນການສະໝັກວຽກ.
7. ໃນຂັ້ນຕອນການຮັບສະໝັກງານ, ທາງທະນາຄານພວກເຮົາແມ່ນຈະບໍ່ມີການຮຽກເກັບຄ່າທຳນຽມໃດໆ, ຖ້າມີຜູ້ຂໍຮຽກເກັບຄ່າທຳນຽມແມ່ນຕ້ອງໄດ້ລະວັງເພື່ອປ້ອງກັນການຖືກຕົວະຕົ້ມ.

**ຫວັງວ່າຈະໄດ້ຮ່ວມງານກັບບັນດາທ່ານ!**

ມີພຽງແຕ່ບັນດາຜູ້ສະໝັກທີ່ໄດ້ເຂົ້າຮອບເທົ່ານັ້ນຈຶ່ງຖືກຕິດຕໍ່ໃຫ້ມາສຳພາດ, ທຸກເອກະສານສະໝັກງານແມ່ນຈະຖືກເກັບຮັກສາໄວ້ເປັນຄວາມລັບ, ພ້ອມນັ້ນອາດເກັບໄວ້ເພື່ອພິຈາລະນາໃນການສະໝັກງານກັບທະນາຄານພວກເຮົາໃນຕໍ່ໜ້າ.